**ຜນວກ ຄ**

ບົດເນື້ອໃນການພົບປະ

ຂອງ ທ່ານ ປະທານປະເທດ ແຫ່ງ ສປປ ລາວ

ກັບ ທ່ານ ເວີນ ເຈັຍປາວ, ນາຍົກລັດຖະມົນຕີ ແຫ່ງ ສປ.ຈີນ

(บทเนื้อในการพบปะของท่านประธานประเทศลาว

กับท่าน เวิน เจียเป่า นายกรัฐมนตรีจีน)

(ปักกิ่ง, 29 มิถุนายน 2006)

------------------

- ຂ້າພະເຈົ້າ ມີຄວາມດີໃຈຫລາຍທີ່ໄດ້ພົບກັບສະຫາຍ ເວີນເຈຍປາວ ເພື່ອນສະຫາຍທີ່ ສະໜິດສະໜົມ ມາແຕ່ນານແລ້ວ ຂອງພວກຂ້າພະເຈົ້າອີກເທື່ອໜຶ່ງ.
- ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ຖານເພື່ອນສະຫາຍ ທີ່ໃກ້ຊິດ ຂອງບັນດາຜູ້ນຳພັກ, ລັດ ສປ ຈີນ ທີ່ມີຕໍ່ຄະນະພວກຂ້າພະເຈົ້າໃນຄັ້ງນີ້.
- ມາຢາມຈີນແຕ່ລະຄັ້ງ, ພວກຂ້າພະເຈົ້າລ້ວນແຕ່ມີຄວາມປະທັບໃຈແລະຕີລາຄາສູງຕໍ່ຜົນສຳ ເລັດອັນໃຫຍ່ຫລວງ, ວ່ອງໄວແລະ ໝັ້ນທ່ຽງທີ່ປະຊາຊົນຈີນອ້າຍນ້ອງຍາດມາໄດ້ພວກ ຂ້າພະເຈົ້າ ເຊື່ອໝັ້ນວ່າ ພາຍໃຕ້ ການນຳພາອັນຖືກຕ້ອງຂອງພັກກອມມູນິດຈີນ, ປະຊາຊົນຈີນຈະສາມາດສືບຕໍ່ພາປະເທດຊາດ ກ້າວຂຶ້ນຢ່າງ ໜັກແໜ້ນ ບົນເສັ້ນທາງແຫ່ງການປະຕິຮູບ ແລະເປີດປະຕູຕາມທິດສະດີເຕີ້ງຊຽວຜີງ ໃນການສ້າງສັງຄົມນິຍົມຕາມສີສັນສະເພາະຂອງຈີນ.

ມື້ວານນີ້, ພວກຂ້າພະເຈົ້າໄປຢາມແຂວງເຫີນານ, ພວກຂ້າພະເຈົ້າຍິ່ງມີຄວາມປີຕິ ຊົມຊື່ນ ທີ່ເຫັນວ່າ ແຂວງນີ້ ເຖິງວ່າມີພົນລະເມືອງເກືອບ 100 ລ້ານຄົນ, ແຕ່ກໍ່ມີຜົນສຳເລັດ ໃນທຸກດ້ານເຊິ່ງຖືວ່າ ເປັນບົດຮຽນອັນປະເສີດ ແລະເປັນການປຸກລະດົມກຳລັງໃຈອັນໃຫຍ່ຫລວງ ແກ່ພວກຂ້າເຈົ້າ.

ສະຫາຍ ເວີນເຈຍປາວ ທີ່ຮັກແພງ,

ປີນີ້, ພວກຂ້າພະເຈົ້າ ມີຄວາມພາກພູມໃຈ ທີ່ເຫັນວ່າ ຕະຫລອດໄລຍະປະຫວັດສາດ ດັ່ງກ່າວ, ການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງປະເທດຂອງພວກເຮົາ ໄດ້ຂະຫຍາຍຕົວຢ່າງ ບໍ່ຢຸດຢັ້ງ ໂດຍສະເພາະ ໃນຊຸມປີມໍ່ໆມານີ້, ພາຍໃຕ້ທິດນຳທີ່ວ່າ "ໝັ້ນຄົງຍາວນານ, ມິດຕະພາບຖານບ້ານໃກ້ເຮືອນຄຽງ, ໄວ້ເນື້ອເຊື່ອໃຈກັນແລະ ຮ່ວມມື ຮອບດ້ານ" ການພົວພັນຮ່ວມມືໃນ ຂົງເຂດຕ່າງໆ ລະຫວ່າງ 2 ປະ ເທດພວກເຮົາໄດ້ມີບາດກ້າວ ຂະຫຍາຍຕົວໃໝ່ທີ່ໜັກແໜ້ນ ແລະ ມີໝາກຜົນຕົວຈິງຫລາຍຂຶ້ນ.

ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ແລະ ຄວາມຂອບໃຈຢ່າງຈິງໃຈ ຂອງ ພັກ, ລັດ ແລະ ປະຊາຊົນລາວຕໍ່ພັກ, ລັດ ແລະປະຊາຊົນຈີນອ້າຍນ້ອງ ທີ່ໄດ້ໃຫ້ການສະໜັບສະໜູນ, ຊ່ວຍເຫລືອອັນໃຫຍ່ຫລວງ ແລະ ລ້ຳຄ່າແກ່ການປະຕິວັດລາວ ຕະຫລອດມາ.

ຂ້າພະເຈົ້າພ້ອມກັບສະຫາຍຮູ ຈິນທາວໄດ້ເປັນເອກະພາບກັນວ່າ, ຈະສືບຕໍ່ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນສະໜິດແໜ້ນ ແລະ ການຮ່ວມມືຮອບດ້ານລາວ-ຈີນ ທີ່ບັນດາຜູ້ນຳຮຸ່ນກ່ອນໄດ້ຮ່ວມກັນສ້າງຂຶ້ນນັ້ນໃຫ້ຂະຫຍາຍຕົວ ແລະ ເກີດດອກອອກຜົນຍິ່ງໆຂຶ້ນເພື່ອຜົນປະໂຫຍດຂອງສອງປະເທດພວກເຮົາ.

ຂ້າພະເຈົ້າ ຂໍສະເໜີຄວາມເຫັນລະອຽດຈຳນວນໜຶ່ງ ຕໍ່ສະຫາຍ ນາຍົກລັດຖະມົນຕີ ດັ່ງລຸ່ມນີ້ :

1/. ສົ່ງເສີມຊຸກຍູ້ການແລກປ່ຽນບົດຮຽນການອົບຮົມ ແລະບຳລຸງຍົກລະດັບພະນັກງານ ຂອງພັກ, ເພີ່ມທະວີການຮ່ວມມືດ້ານການສ້າງພະນັກງານ (ພະນັກງານນຳພາ ແລະ ວິຊາການ) ຂອງລາວຢູ່ ສ ປ ຈີນ ເຊິ່ງພວກ ຂ້າພະເຈົ້າ ຖືວ່າ ແມ່ນຈຸດສຸມບູລິມະສິດຕົ້ນຕໍອັນໜຶ່ງໃນການຮ່ວມມືລະຫວ່າງສອງຝ່າຍທັງໃນສະເພາະໜ້າ ແລະ ຍາວນານ. ຂໍສະແດງຄວາມຂອບໃຈ ເປັນຢ່າງຍິ່ງ ທີ່ບັນດາສະຫາຍໄດ້ສືບຕໍ່ໃຫ້ທຶນການທັດສະນະສຶກສາ ແກ່ພະນັກງານການນຳ ຂັ້ນສູງຂອງລາວ; ພິເສດແມ່ນບັນດາສະຫາຍໄດ້ຕົກລົງຊ່ວຍເຫລືອພວກຂ້າພະເຈົ້າ ໃນ ການສ້າງພະນັກງານສືບທອດ ເຊິ່ງອັນນີ້ເປັນປັດໄຈໃໝ່ ແລະ ເປັນທຶນຮອນອັນໃຫຍ່ຫລວງ ແລະ ປະເສີດ ທີ່ສຸດສຳລັບພວກຂ້າພະເຈົ້າ.

2/. ເພີ່ມທະວີການຮ່ວມມືກັນ ຜັນຂະຫຍາຍແຜນນະໂຍບາຍເອົາການພັດທະນາບັນດາແຂວງພາກເໜືອ ຂອງລາວ ຕິດພັນກັບການພັດທະນາຂອງມົນທົນພາກໃຕ້ຂອງຈີນ, ປະກອບສ່ວນເຂົ້າໃນການສົ່ງເສີມການຮ່ວມມື ລະຫວ່າງຈີນ ກັບອາຊຽນ.

3/. ໃຫ້ລັດຖະບານທັງສອງຊຸກຍູ້ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງທີ່ໄດ້ມີນຳກັນແລ້ວ, ເປັນຕົ້ນແມ່ນ:

(1) ການຊຸກຍູ້ການຮ່ວມມືເຮັດການຜະລິດສິນຄ້າຢູ່ລາວ, ໂດຍສະເພາະໃນການປຸງແຕ່ງຜະລິດຕະພັນ ກະສິກຳ-ປ່າໄມ້ເພື່ອສະໜອງຄວາມຕ້ອງການພາຍໃນ ແລະເພີ່ມສິນຄ້າຂາອອກຂອງລາວ.

(2) ການລົງທຶນສ້າງເຂື່ອນໄຟຟ້ານ້ຳຕົກຢູ່ລາວ,

(3) ການເຮັດລະບົບສາຍສົ່ງໄຟຟ້າຈາກກວາງຈັນໄປຫາພາກໃຕ້ຂອງລາວ, ກ້າວໄປເຖິງເຊື່ອມເຂົ້າກຳປູເຈຍ.

(4) ການສ້າງຕາຂ່າຍ ແລະ ສະຖານີ ເພື່ອເອົາໄຟຟ້າຈາກແຂວງຢຸນນານ ເຂົ້າບັນດາແຂວງພາກເໜືອ ຂອງລາວ.

(5) ການສ້ອມແປງຍົກລະດັບທາງແຕ່ນາເຕີຍຫາປາກມອງ.

(6) ຂະຫຍາຍ ແລະປັບປຸງສະຖານີໂທລະພາບແຫ່ງຊາດ.

(7) ໂຄງການສ້າງມະຫາວິທະຍາໄລຈຳປາສັກ.

(8) ໂຄງການສ້າງທະນາຄານຮ່ວມລາວ-ຈີນ.

(9) ການຂຸດຄົ້ນ ແລະປຸງແຕ່ງເກືອກາລີ ຢູ່ວຽງຈັນ.

4/. ສະເໜີສອງຝ່າຍຮ່ວມມືກັນ ໃນການຄົ້ນຄ້ວາການສ້າງທາງລົດໄຟ ແຕ່ນະຄອນຫລວງ ວຽງຈັນ ເຂົ້າມາຫາຈີນ; ໃນສະເພາະໜ້ານີ້ແມ່ນຄົ້ນຄວ້າການສ້າງທາງລົດໄຟແຕ່ຂົວມິດຕະພາບ ລາວ-ໄທ ຫາຫລັກ 21 ເຊິ່ງ ເປັນ ເຂດພັດທະນາອຸດສາຫະກຳ ຂອງນະຄອນຫລວງວຽງຈັນ.

\+ ພ້ອມກັນນັ້ນ ກໍ່ຄົ້ນຄ້ວາສ້າງອ່າງເກັບນ້ຳຢູ່ແຂວງພາກໃຕ້ຂອງລາວ ເຊິ່ງໃນສະເພາະ ໜ້ານີ້ ສະເໜີ ເຮັດຢູ່ ແຂວງຈຳປາສັກກ່ອນ.

5/. ພວກຂ້າພະເຈົ້າ ມີຄວາມຈຳເປັນທາງດ້ານທຶນຮອນ ເພື່ອຮັບໃຊ້ວຽກງານພັດທະນາ ເສດຖະກິດ-ສັງຄົມ ແລະເພື່ອວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ສະເໜີບັນດາ ສະຫາຍພິຈາລະຈາຊ່ວຍສະໜອງທຶນຮອນໃຫ້ແກ່ພວກຂ້າພະເຈົ້າດ້ວຍຮູບການທັບຊັບສິນ ເປັນທຶນ. ຈະແມ່ນບໍ່ແຮ່, ເຂື່ອນໄຟຟ້ານ້ຳຕົກ, ປ່າໄມ້ ອື່ນໆ ເຊິ່ງລະອຽດໃຫ້ວິຊາການ ສອງຝ່າຍປະສານ ກັນ.

6/. ເພີ່ມທະວີການຮ່ວມມືກັນ ແລະປະສານສົມທົບກັນແໜ້ນແຟ້ນຕື່ມອີກ ໃນການເຄື່ອນ ໄຫວການຕ່າງປະເທດ ໃນເວທີພາກພື້ນ ແລະສາກົນ. ລັດຖະບານ ສປປ ລາວ ສະແດງຄວາມຊົມເຊີຍຕໍ່ ບົດບາດອັນນັບມື້ນັບສູງ ຂຶ້ນ ຂອງ ສປຈີນ ໃນການຮ່ວມມືໃນຂອບອາຊຽນ, ອາຊຽນ+3, ໃນຂອບກອງ ປະຊຸມສຸດຍອດອາຊີຕາວັນອອກ ກໍ່ຄືໃນພາລະກິດປົກປັກຮັກສາ ສັນຕິພາບ, ສົ່ງເສີມການຮ່ວມມືເພື່ອ ການພັດທະນາລະຫວ່າງບັນດາປະຊາຊາດ.

7/. ເພີ່ມທະວີການຮ່ວມມືກັນໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ພວກຂ້າ ພະເຈົ້າ ຂໍສະເໜີບັນດາສະຫາຍ ຊ່ວຍໃນດ້ານການສ້າງນາຍທະຫານ ແລະ ການປະກອບ ອຸປະກອນ ເຕັກນິກອັນຈຳເປັນໃຫ້ ກຳລັງປະເພດຕ່າງໆ, ໃນສະເພາະໜ້ານີ້ ສະເໜີບັນດາ ສະຫາຍຊ່ວຍຍົນຂຶ້ນຊື້ Z9 ສີ່ລຳ ດ້ວຍການກູ້ຢືມ ແບບຜ່ອນຜັນ ແລະໃຊ້ແທນຄືນໄລຍະຍາວ.

\+ ພວກຂ້າພະເຈົ້າ ຄິດວ່າຖ້າລັດຖະບານຈີນຕົກລົງໃຫ້ພວກຂ້າພະເຈົ້າກູ້ຢືມ 200 ລ້ານ ໂດລາ, ພວກຂ້າ ພະເຈົ້າຈະເອົາເຄິ່ງໜຶ່ງໃຫ້ກຳລັງປະກອບອາວຸດ ແລະອີກເຄິ່ງໜຶ່ງໃຊ້ເຂົ້າໃນ ການພັດທະນາ ເສດຖະກິດ-ສັງຄົມ

8/. ພວກຂ້າພະເຈົ້າມີຄວາມດີໃຈຫລາຍ ທີ່ໃນໄລຍະຫລັງມານີ້, ການລົງທຶນຂອງຈີນຢູ່ລາວ ໄດ້ເພີ່ມຂຶ້ນຢ່າງຈະແຈ້ງ. ສະເໜີໃຫ້ພາກສ່ວນກ່ຽວຂ້ອງ, ທົ່ວໜ່ວຍເສດຖະກິດ-ທຸລະກິດ ຂອງຈີນ ໄປຄົ້ນຄ້ວາ ແລະ ລົງ ທຶນໃນຂະແໜງການຕ່າງໆຢູ່ລາວ ຫລາຍຕື່ມອີກ. ຝ່າຍລາວຍິນດີຕ້ອນຮັບ ແລະ ຈະອຳນວຍຄວາມສະດວກເປັນພິເສດແກ່ນັກທຸລະກິດຈີນ ໄປລົງທຶນຢູ່ລາວ ບົນພື້ນຖານຕ່າງຝ່າຍຕ່າງ ໄດ້ຮັບຜົນປະໂຫຍດ.

9/. ສະເໜີໃຫ້ລັດຖະບານທັງສອງຊັ້ນຳຄະນະກຳມາທິການຮ່ວມມືລາວ-ຈີນ ໃຫ້ເພີ່ມທະວີການປຶກສາຫາລື ກັນ ແລະ ປະສານສົມທົບກັນຢ່າງເປັນປະຈຳ ເພື່ອເປັນກົນໄກຊຸກຍູ້ ການຮ່ວມມືສອງຝ່າຍໃຫ້ຂະຫຍາຍຕົວດ້ວຍປະສິດທິຜົນສູງຍິ່ງໆຂຶ້ນ ແລະ ເປັນຜົນປະໂຫຍດໃຫ້ແກ່ປະຊາຊົນສອງຊາດພວກເຮົາ.

+ ຂໍຂອບໃຈ ຢ່າງຈິງໃຈຕໍ່ສະຫາຍ ນາຍົກລັດຖະມົນຕີ ເວີນເຈັຽປາວ ທີ່ໄດ້ປະກອບສ່ວນອັນລ້ຳຄ່າເຂົ້າ ໃນການຮັດແໜ້ນສາຍພົວພັນມິດຕະພາບ ແລະ ສົ່ງເສີມການຮ່ວມມື ລະຫວ່າງ 2 ປະເທດ.

+ ອີກເທື່ອໜຶ່ງ, ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບຢ່າງອົບອຸ່ນຈາກສະຫາຍນາຍົກລັດຖະມົນຕີ ເວີນເຈັຽປາວ ແລະບັນດາຜູ້ນຳພັກ, ລັດຈີນທີ່ມີຕໍ່ຄະນະພວກຂ້າພະເຈົ້າໃນການຢາມຈີນ ຄັ້ງນີ້ດ້ວຍ.

——————— * * * ———————

ສະເໜີ ສະຫາຍ ເລຂາທິການໃຫຍ່ອີງໃສ່ຄວາມເຫັນຂອງນາຍົກຈີນ ເວີນ ເຈຽປາວ.

+ ຖ້າເພີ່ນເວົ້າເຖິງກອງປະຊຸມໃຫຍ່ຂອງພັກເຮົາ ແລະ ສະພາບການຢູ່ປະເທດເຮົາ ແມ່ນສະເໜີສະຫາຍ ເລຂາທິການໃຫຍ່ ສະແດງຄວາມຂອບໃຈ.

+ ຖ້າເພີ່ນເວົ້າເຖິງການຊ່ວຍເຫລືອກໍ່ສະເໜີໃຫ້ ສະແດງຄວາມຂອບໃຈ ແລະ ຢືນຢັນຈະນຳໃຊ້ການຊ່ວຍ ເຫລືອນີ້ໃຫ້ມີປະສິດທິຜົນສູງ.